**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ຫ້ອງວ່າການ ເລກທີ: 2376 /ຫອນວ

ວັນທີ: 5 ທັນວາ 2023

## ໜັງສືທາງລັດຖະການ

**ຮຽນ:** ທ່ານປະທານອົງການກວດກາລັດ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ໜັງສືສະເໜີຂອງທ່ານ ອາລີວັນ ສີທາລາ.

- ອີງຕາມ ໜັງສືສະເໜີຂອງທ່ານ ອາລີວັນ ສີທາລາ ສະບັບເລກທີ 1230/ອນ, ລົງວັນທີ 20 ພະຈິກ 2023.
- ອີງຕາມ ການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ລົງວັນທີ 24 ພະຈິກ 2023.

ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີການຊີ້ນຳຂອງຂັ້ນເທິງມາຍັງທ່ານ ດັ່ງນີ້:

**" ມອບໃຫ້ ອົງການກວດກາລັດ ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າ ມີຄຳເຫັນ ".**

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມການຊີ້ນຳຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ**

<u>ບ່ອນສົ່ງ</u>:
- ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ;
- ຄະນະຫ້ອງວ່າການ ນວ ທ່ານລະ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.

ຫ້ອງວ່າການ

ປອ. ໂພຄຳ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ສີສັດຕະນາກ
ບ້ານ ວັດນາກ

ເລກທີ 1230 /ວນ
ລົງວັນທີ 20 NOV 2023

ສໍານັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ຂາເຂົ້າ
ເລກທີ: 5080
ວັນທີ: 23.11.2023

ໜັງສືສະເໜີ.

ຮຽນ: ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ທີ່ນັບຖື.

ເລື່ອງ: ຂໍໃຫ້ກວດກາພະນັກງານ ພ້ອມທັງປະຕິບັດວິໃນ ຜູ້ທີ່ພົວພັນກັບໃບຕາດິນ ເລກທີ 1269 ດິນຕັ້ງຢູ່ບ້ານ ໂນນ ສະອາດ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ.

-ອີງຕາມ **ມາດຕາ 41** ຂອງລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015.

-ອີງຕາມ **ມາດຕາ 59,63** ຂອງກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ,ລົງວັນທີ 18ທັນວາ 2015.

-ອີງຕາມ **ມາດຕາ3** ຂໍ້ຕົກລົງວ່າດ້ວຍຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດຖະກອນ ຂະແໜງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ2458/ກຊສ,ລົງວັນທີ03 ມິຖຸນາ2021.

-ອີງຕາມ ບົດລາຍງານ ຂອງ ຫົວໜ້າຂະແໜງທີ່ດິນ ສະບັບເລກທີ745/ຂທດ,ລົງວັນທີ 6 JUL2023.

-ອີງຕາມ ແຈ້ງການ ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບ ເລກທີ6303/ພຊສ.ນວ,ລົງວັນທີ 27JUL2023

ຂ້າພະເຈົ້າ ທ້າວ ອາລີວັນ ສີທາລາ ອາຍຸ 40 ປີ ອາຊີບ ນັກທຸລະກິດ ປະຈຸບັນ ຢູ່ບ້ານ ວັດນາກ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ ຂໍຮຽນສະເໜີ ມາຍັງ ເຈົ້າຄອງ ນະຄອນຫຼວງວຽງຈັນ ຊາບວ່າ: ປະຈຸບັນໄດ້ມີພະນັກງານ ຢູ່ຈຸງານ ສຳມະໂນ ຈຳນວນໜຶ່ງ ໄດ້ມີການເຄື່ອນໄຫວ ນຳເອົາໃບຕາດິນ ເລກທີ 1269,ເຫຼັ້ມທີ26,ໃບທີ19,ແຜນທີດິນເລກທີA250-002, ຕອນດິນເລກທີ626 ມີເນື້ອທີ່ 11,921 ຕາແມັດ **ອອກຊື່:ນາງ ຈັນຟ້າໃສ ອິວາກິ** ,ດິນຕັ້ງຢູ່ບ້ານ ໂນນ ສະອາດ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ. ດິນຕອນດັ່ງກ່າວແມ່ນເປັນກຳມະສິດ ຂອງພວກຂ້າພະເຈົ້າແລະ ພວກຂ້າພະເຈົ້າໄດ້ມາດ້ວຍຄວາມຖືກຕ້ອງ ຕາມລະບຽບກົດໝາຍ.

## I. ປະຫວັດຄວາມເປັນມາຂອງໃບຕາດິນ.

-ໃນປີ 2019-2020 ພວກຂ້າພະເຈົ້າ ໄດ້ນຳເອົາເອກະສານໃບຕາດິນເລກທີ 1269,ເຫຼັ້ມທີ26,ໃບທີ19,ແຜນທີດິນເລກທີA250-002, ຕອນດິນເລກທີ626 ມີເນື້ອທີ່ 11,921 ຕາແມັດ **ອອກຊື່:ນາງ ຈັນຟ້າໃສ ອິວາກິ** ,ດິນຕັ້ງຢູ່ບ້ານ ໂນນ ສະອາດ ເມືອງ ໄຊທານີ ມາຍື່ນເພື່ອຂໍຢັ້ງຢືນຄວາມຖືກຕ້ອງຂອງໃບດິນ ຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ພາຍຫຼັງຍື່ນເອກະສານແລ້ວ ທາງໜ່ວຍງານກວດກາຂັດຄ້ານໄດ້ກວດກາເຫັນວ່າ: ໃບຕາດິນຕອນດັ່ງກ່າວ ມີການອາຍັດຈາກສານ ຈຶ່ງບໍ່ສາມາດເຄື່ອນໄຫວໄດ້. ພາຍຫຼັງທີ່ເຫັນວ່າ ໃບຕາດິນຕອນດັ່ງກ່າວ ເຄື່ອນໄຫວບໍ່ໄດ້ ພວກຂ້າພະເຈົ້າ ກໍ່ໄດ້ມາພົວພັນ ນຳພະນັກງານຜູ້ທີ່ຮັບ ຜິດຊອບກວດກາຂັດຂ້ານ ເພື່ອຂໍຖອນໃບຕາດິນເພື່ອເອົາຄືນເມືອໄວ້. ເພາະວ່າມັນເຄື່ອນໄຫວບໍ່ໄດ້. ພວກຂ້າພະເຈົ້າໃຊ້ເວລາໃນການມາຂໍຖອນໃບຕາດິນ ເກືອບໜຶ່ງປີ. ແຕ່ພະນັກງານກໍ່ບໍ່ຍອມຖອນໃຫ້ ແລະ ກໍ່ບໍ່ມີຄຳຕອບ ໃຫ້ແກ່ພວກ ຂ້າພະເຈົ້າ.

-ຕໍ່ມາຮອດວັນທີ 5/7/2022 ພວກຂ້າພະເຈົ້າໄດ້ມາຢື່ນເອກະສານຂໍຖອນໃບຕາດິນ ຕາມໃບຮັບເອກະສານ ຂາເຂົ້າ ຂອງພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 3040/ພຊສ.ນວ,ລົງວັນທີ 5/7/2022.

-ຕໍ່ມາຮອດທ້າຍປີ 2022 ຈຸສຳມະໂນ ທ້າວ ກິງແສງ ດວງພະຈັນ ໄດ້ແຈ້ງໃຫ້ພວກຂ້າພະເຈົ້າ ວ່າ: ໃບຕາດິນຕອນດັ່ງກ່າວໄດ້ເສຍແລ້ວ. ຈຶ່ງແນະນຳໃຫ້ພວກຂ້າພະເຈົ້າ ເຮັດໜັງສືແຈ້ງເສຍຫາຍມາຢື່ນ ຢູ່ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ພາຍຫຼັງໄດ້ຮັບຄຳແນະນຳຈາກພະນັກງານພະແນກຊັບແລ້ວ ຂ້າພະເຈົ້າກໍ່ໄດ້ປະກອບເອກະສານໄປຢື່ນ. ແລ້ວພະແນກຊັບ ຈຶ່ງໄດ້ປະກອບເອກະສານໃຫ້ພວກ ຂ້າພະເຈົ້າ ໄປຢື່ນສານດັ່ງນີ້:

1.ບົດບັນທຶກ ຂອງຫົວໜ້າຂະແໜງ ທີ່ດິນ ລົງວັນທີ 19/07/2023.

2.ບົດລາຍງານ ຂອງຫົວໜ້າຂະແໜງທີ່ດິນ ສະບັບເລກທີ 775/ຂທດ,ລົງວັນທີ 11 JUL2023.

3.ໜັງສືສະເໜີ ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 8724/ພຊສ.ນວ,ລົງວັນທີ11 JUL2023.

ປະຈຸບັນ ແມ່ນສານ ປະຊາຊົນເຂດII ນະຄອນຫຼວງວຽງຈັນ ແມ່ນຢູ່ໃນຂັ້ນຄົ້ນຄ້ວາເອກະສານ ຂໍລົບລ້າງໃບຕາດິນ ເລກຕາດິນ ເລກທີ 1269,ເຫຼັ້ມທີ26,ໃບທີ19,ແຜນທີດິນເລກທີA250-002, ຕອນດິນເລກທີ626 ມີເນື້ອທີ່ 11,921 ຕາແມັດ **ອອກຊື່:ນາງ ຈັນຟ້າໃສ ອິອາກິ** ,ດິນຕັ້ງຢູ່ບ້ານ ໂນນສະອາດ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ.ພາຍຫຼັງທີ່ເອກະສານ ຂ້າພະເຈົ້າໄປຢື່ນສານແລ້ວ ພະນັກງານພະແນກຊັບ ທ້າວ ແກະຄຳ ລ້ອນທຳມະຂັນ ໄດ້ແຈ້ງຕໍ່ ຂ້າພະເຈົ້າວ່າ: ໃບຕາດິນເຫັນແລ້ວ ບໍ່ໄດ້ເສຍຫາຍ.ພາຍຫຼັງໄດ້ຮັບຄຳຢືນຢັນ ຈາກພະນັກງານພະແນກຊັບແລ້ວ ຂ້າພະເຈົ້າ ກໍ່ໄດ້ ເຂົ້າໄປພົວພັນເອົາໃບຕາຂອງຂ້າພະເຈົ້າ (ໄປຂໍຖອນ) ຈຶ່ງໄດ້ປະກົດເຫັນວ່າ ໃບຕາດິນຕາດິນເລກທີ 1269,ເຫຼັ້ມທີ26,ໃບທີ19, ແຜນທີດິນເລກທີA250-002, ຕອນດິນເລກທີ626 ມີເນື້ອທີ່ 11,921 ຕາແມັດ **ອອກຊື່:ນາງ ຈັນຟ້າໃສ ອິອາກິ** ,ດິນຕັ້ງຢູ່ບ້ານ ໂນນສະອາດ ເມືອງ ໄຊທານີ ແມ່ນພະນັກງານກຳລັງເອົາໃບຕາດິນໄປແບ່ງແລ້ວ ທັ້ງໆ ທີ່ພະນັກງານແຈ້ງຂ້າພະເຈົ້າວ່າ ໃບຕາດິນເສຍ.

ຕໍ່ກັບບັນຫາດັ່ງກ່າວ ຂ້າພະເຈົ້າ ຈຶ່ງບໍ່ພໍໃຈ ຕໍ່ກັບການປະຕິບັດໜ້າທີ່ຂອງພະນັກງານພະແນກຊັບ ຜູ້ທີ່ຮັບຜິດຊອບໃບຕາດິນ. ຊຶ່ງພວກຜູ້ກ່ຽວ ແມ່ນໄດ້ສົມຮູ້ຮ່ວມຄິດ ຍັກຍອກເອົາຊັບພົນລະເມືອງ ຊຶ່ງມັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ຂ້າພະເຈົ້າ ແລ ະຜິດຕໍ່ລະບຽບກົດໝາຍ.

- **ພາກສະເໜີ.**

1.ສະເໜີ ໃຫ້ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ກວດກາພະນັກງານຜູ້ທີ່ພົວພັນກັບ ໃບຕາດິນຕອນດັ່ງກ່າວ ຕາມ **ມາດຕາ 3** ຂໍ້ຕົກລົງວ່າດ້ວຍຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດ ຖະກອນ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 2458/ກຊສ,ລົງວັນທີ 03 ມິຖຸນາ2021.

2.ສະເໜີ ໃຫ້ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ນຳໃຊ້ **ມາດຕາ3** ຂອງຂໍ້ຕົກລົງວ່າດ້ວຍຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດຖະກອນ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ2458/ກຊສ,ລົງວັນທີ03 ມິຖຸນາ2021

3.ສະເໜີ ໃຫ້ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ຊີ້ນຳ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ ນະຄອນຫຼວງວຽງຈັນ ສົ່ງໃບຕາດິນ ຄືນໃຫ້ແກ່ຂ້າພະເຈົ້າ ເພື່ອນຳໄປດຳເນີນຕໍ່ຕາມລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຄົ້ນຄ້ວາ ແລະພິຈາລະນາໃຫ້ແກ່ພວກຂ້າພະເຈົ້າ ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ນາຍບ້ານ

ຜູ້ສະເໜີ

ເບີໂທ:5551 2354

**ອາລີວັນ ສີທາລາ**

ຄຳມວນ ອິນດາວົງ

Khammouane INDAVONG